# ການຂໍຄວາມຊ່ວຍເຫຼືອເລື່ອງໃບບິນຂອງທ່ານ

## ບົດສະຫຼຸບກ່ຽວກັບນະໂຍບາຍວ່າດ້ວຍຄວາມຊ່ວຍເຫຼືອດ້ານການເງິນຂອງ Texas Health

Texas Health Resources ແລະ ໂຮງໝໍໃນເຄືອຂອງເຂົາເຈົ້າໃຫ້ການຊ່ວຍເຫຼືອ ດ້ານການເງິນອີງຕາມນະໂຍບາຍວ່າດ້ວຍການຊ່ວຍເຫຼືອດ້ານການເງິນຂອງ Texas Health. ນີ້ອາດນຳໃຊ້ກັບທຸກຄົນທີ່ໄດ້ຮັບການບໍລິການຈາກຜູ້ໃ ຫ້ບໍລິການທີ່ເປັນໂຮງໝໍ, ການດູແລສຸກເສີນ ຫຼື ທ່ານໝໍຈາກໂຮງໝໍໃນເຄື ອຂອງ Texas Health ຫຼື ນິຕິບຸກຄົນອື່ນທີ່ໄດ້ຮັບຄວາມຄຸ້ມຄອງ. ມີນະໂຍບາຍວ່າດ້ວຍ ຄວາມຊ່ວຍເຫຼືອດ້ານການເງິນ, ຄຳຮ້ອງຂໍຄວາມຊ່ວຍເຫຼືອດ້ານການເງິນ ແລະ ບົດສະຫຼຸບໂດຍໃຊ້ພາສາທີ່ເຂົ້າໃຈງ່າຍເປັນພາສາອັງກິດ ແລະ ພາສາສະເປນ ແລະ ພາສາອື່ນໆໃຫ້ຖ້າຕ້ອງການ. ການຊ່ວຍເຫຼືອດ້ານການເງິນຂອງ Texas Health ນຳໃຊ້ກັບໃບບິນເກັບເງິນຈາກໂຮງໝໍທີ່ໄດ້ຮັບການຍົກ ເວັ້ນພາ ສີທີ່ມີການຄວບຄຸມທັງໝົດ ແລະ ນິຕິບຸກຄົນ/ໜ່ວຍງານອື່ນ ຕາມທີ່ອະທິບາ ຍໄວ້ໃນເອກະສານຕິດຄັດ C ຂອງນະໂຍບາຍການຊ່ວຍ ເຫຼືອດ້ານການເງິນຂອງ Texas Health.

### ຂ້າພະເຈົ້າຈະມີສິດໄດ້ຮັບການຊ່ວຍເຫຼືອດ້ານການເງິນໄດ້ແນວໃດ?

ທ່ານສາມາດຮ້ອງຂໍຄວາມຊ່ວຍເຫຼືອເລື່ອງໃບບິນຂອງທ່ານໄດ້ທຸກເວລາໃນ ລະຫວ່າງການພັກຮັກສາຕົວຢູ່ໂຮງໝໍຂອງທ່ານ ຫຼື ລະຫວ່າງຂັ້ນຕອນການຮຽກ ເກັບເງິນ. ພວກເຮົາຈະຕັດສິນກຳນົດວ່າທ່ານຕິດໜີ້ຫຼາຍປານໃດ ໂດຍ ການກວດເບິ່ງລາຍຮັບ, ຊັບສິນ ຫຼືຊັບພະຍາກອນອື່ນ. ຖ້າລາຍຮັບປະຈຳປີຂອງ ທ່ານໜ້ອຍກວ່າ ຫຼືເທົ່າກັບ 250% ຂອງເກນຄວາມຍາກຈົນຂອງລັດຖະບານກາງ ໃນປະຈຸບັນ ທ່ານອາດຈະໄດ້ຮັບຄວາມຊ່ວຍເຫຼືອດ້ານການເງິນບາງຢ່າງ.

ສາມາດເບິ່ງຂໍ້ກຳນົດວ່າດ້ວຍເກນຄວາມຍາກຈົນຂອງລັດຖະບານກາງໄດ້ທີ່: **http://aspe.hhs.gov/poverty/index.cfm.**

ທ່ານອາດຈະມີຄຸນສົມບັດໄດ້ຮັບຄວາມຊ່ວຍເຫຼືອກັບທັງໝົດ ຫຼື ບາງສ່ວນຂອງໃບ ບິນຄ່າປິ່ນປົວຈາກໂຮງໝໍ, ການດູແລຮີບດ່ວນ ຫຼື ທ່ານໝໍ/ຜູ້ໃຫ້ບໍລິກາ ນຂອງ ທ່ານ. ຄວາມຊ່ວຍເຫຼືອແມ່ນອີງໃສ່ອັດຕາແບບປັບເລື່ອນໄດ້ທີ່ພິຈາລ ະນາເຖິງ ລາຍໄດ້ປະຈຳປີ, ຂະໜາດຄອບຄົວ ແລະ ຊັບພະຍາກອນທີ່ມີຢູ່ຂອງທ່ານ.

### ຂ້າພະເຈົ້າຈະສາມາດຂໍການຊ່ວຍເຫຼືອດ້ານການເງິນໄດ້ແນວໃດ?

ເພື່ອຮັບສຳເນົາຄຳຮ້ອງຂໍການຊ່ວຍເຫຼືອດ້ານການເງິນຟຣີ ຫຼື ນະໂຍບາຍວ່າ ດ້ວຍການຊ່ວຍເຫຼືອດ້ານການເງິນ ໃຫ້ໄປທີ່: **texashealth.org/Costs-and-Billing/Financial-Assistance**

ໃນໜ້າເວັບນີ້, ຍັງມີລິ້ງໃຫ້ສະໝັກທາງອອນລາຍຜ່ານປະຕູເວັບ MyChart ຂອງພວກເຮົາໄດ້ນຳອີກ.

ນອກຈາກນັ້ນ ທ່ານຍັງສາມາດໄປຮັບສຳເນົາສະບັບເຈ້ຍຟຣີ, ຂໍຮັບສຳເນົາ ຟຣີທາງໄປສະນີ ຫຼື ຂໍຄວາມຊ່ວຍເຫຼືອໃນການຮ້ອງຂໍດ້ວຍຕົນເອງໄດ້ທີ່ໂຮງໝໍ Texas Health ທຸກແຫ່ງຢູ່ພະແນກຮັບຄົນເຈັບ, ຄລີນິກທ່ານໝໍຂອງ Texas Health ຫຼື ໄປທີ່ Central Business Office (ໂດຍການນັດໝາຍເທົ່ານັ້ນ). ພະແນກບໍລິການລູກຄ້າຂອງພວກເຮົາສາມາດຊ່ວຍເຫຼືອທ່ານໃນການນັດໝາຍ ຫຼື ຊ່ວຍຕອບຄຳຖາມຕ່າງໆກ່ຽວກັບນະໂຍບາຍວ່າດ້ວຍຄວາມຊ່ວຍເຫຼື ອດ້ານການເງິນ ຫຼື ຂັ້ນຕອນການສະໝັກຂໍຄວາມຊ່ວຍເຫຼືອໄດ້ໂດຍໂທຫາເບີ 800.890.6034.

### ເອກະສານ

ທ່ານມີໜ້າທີ່ຮັບຜິດຊອບໃນການໃຫ້ຂໍ້ມູນກ່ຽວກັບຜົນປະໂຫຍດດ້ານສຸຂະພາບ, ລາຍໄດ້, ຊັບສິນຂອງທ່ານ ແລະ ເອກະສານອື່ນໆທີ່ຈະຊ່ວຍສະແດງໃຫ້ເຫັນວ່າ ທ່ານມີຄຸນສົມບັດຕາມເກນ. ເອກະສານອາດຈະລວມມີໃບແຈ້ງຍອດບັນຊີ ທະນາຄານ, ແບບຟອມອາກອນລາຍໄດ້, ຂອັ້ນໃບເຊັກ ຫຼື ຂໍ້ມູນອື່ນໆ.

### ການດູແລເບິ່ງແຍງສຸກເສີນ ແລະ ມີຄວາມຈຳເປັນທາງການແພດ

ຖ້າທ່ານມີຄຸນສົມບັດໄດ້ຮັບຄວາມຊ່ວຍເຫຼືອເລື່ອງໃບບິນຂອງທ່ານ ທ່ານຈະບໍ່ຖືກ ຮຽກເກັບເງິນຄ່າດູແລເບິ່ງແຍງສຸກເສີນ ຫຼື ມີຄວາມຈຳເປັນທາງການແພດ ຫຼາຍກວ່າຈຳນວນເງິນທີ່ຮຽກເກັບໂດຍທົ່ວໄປກັບຜູ້ທີ່ມີຄວາມຄຸ້ມຄອງສຳລັບ ການດູແລເບິ່ງແຍງປະເພດດຽວກັນ. ເພື່ອກຳນົດຈຳນວນເງິນທີ່ຮຽກເກັບໂດຍ ທົ່ວໄປ ພວກເຮົາໃຊ້ວິທີການເບິ່ງຄືນ (ພວກເຮົາປຽບທຽບຈຳນວນເງິນທີ່ຈ່າຍ ໂດຍຄົນເຈັບທີ່ໄດ້ຮັບຄວາມຄຸ້ມຄອງ ແລະ ບໍລິສັດປະກັນໄພຂອງເຂົາເຈົ້າໃນ ປີກ່ອນນີ້).

### ກິດຈະກຳຮຽກເກັບໜີ້

ໃບບິນທີ່ຄ້າງຈ່າຍເປັນເວລາ 120 ມື້ຈາກວັນທີອອກຈາກໂຮງໝໍອາດຈະຖືກໂ ອນຍ້າຍໄປຍັງໜ່ວຍງານຮຽກເກັບໜີ້ພາຍນອກ. ທ່ານ ຫຼື ຜູ້ຄໍ້າປະກັນສາມາດຂໍ ເອົາຄວາມຊ່ວຍເຫຼືອເລື່ອງໃບບິນຂອງທ່ານໄດ້ທຸກເວລາໃນລະຫວ່າງຂະບວນການ ເກັບໜີ້ ໂດຍການຕິດຕໍ່ຫາຝ່າຍບໍລິການລູກຄ້າທີ່ເບີ **800-890-6034**.

Texas Health

ຫົວຂໍ້ນີ້ກ່ຽວຂ້ອງກັບການບໍລິການຢູ່ໂຮງໝໍເທົ່ານັ້ນ. ໂດຍທົ່ວໄປແລ້ວ Texas Health Resources (THR) ຈະຕິດຕາມຮຽກເກັບຄ່າສິນຄ້າ ແລະ ຄ່າບໍລິການດ້ານການດູແລເບິ່ງແຍງສຸຂະພາບຈາກແຫຼ່ງຊຳລະເ ງິນພາກສ່ວນທີ ສາມກ່ອນຕາມລຳດັບຕາມຂໍ້ມູນທີ່ມີ ແລະ ມີສິດຮຽກເກັບເງິນອີງຕາມການມອບໝາຍຜົນປະໂຫຍດທີ່ສະໜອງໃຫ້ກັບຄົນເຈັບໃນເວລາເຂົ້າປິ່ນປົວ. ສຳລັບການປິ່ນປົວທາງການແພດທີ່ຈຳເປັນກໍລະນີອຸປະຕິເຫດທາງລົດຍົນ (MVA) ຝ່າຍທີ່ກໍ່ໃຫ້ເກີດການບາດເຈັບ (ຫຼື ບໍລິສັດປະກັນໄພທີ່ຮັບຜິດຊອບ) ມີໜ້າທີ່ຫຼັກໃນການຮັບຜິດຊອບຕາມກົດໝາຍໃນການຈ່າຍຄ່າບິນທາງການແພດຂອງຜູ້ເຄາະຮ້າຍຈາກອຸປະຕິເຫດ. ເມື່ອປຽບທຽບກັບແລ້ວ ຄວາມຄຸ້ມຄອງສຸຂະພາບ (ລວມທັງແຜນປະກັນເອກະຊົນ, ແຜນປະກັນທີ່ນາຍຈ້າງຈ່າຍໃຫ້ ຫຼື ແຜນປະກັນຂອງລັດຖະບານ) ໂດຍທົ່ວໄປແລ້ວຈະເປັນແຫຼ່ງການຈ່າຍສຳຮອງ ຍົກເວັ້ນກໍລະນີມີພາລະໃນການຈ່າຍເງິນຕາມສັນຍາ ຫຼື ຕາມກົດໝາຍທີ່ປ່ຽນແປງລໍາ ດັບພາລະນັ້ນ. ນະໂຍບາຍຂອງ THR ແມ່ນເພື່ອອະນຸຍາດໃຫ້ຜູ້ຕ່າງໜ້າຂອງຄົນເຈັບໃຊ້ລະບົບຄວາມຊ່ວຍເຫຼືອດ້ານການເງິນ ແລະ ແຟ້ມເອກະສານກແບບອີເລັກໂທຣນິກຂອງ THR ເມື່ອມີການຊຳລະຄ່າບໍລິການຂອງ THR ພ້ອມກັນ ກັບບໍລິສັດປະກັນຕາມສັນຍາຮ່ວມກັນ. ບໍ່ອະນຸຍາດໃຫ້ມີການເຂົ້າເຖິງ ແລະ ການໃຊ້ລະບົບ ແລະ ແຟ້ມເອກະສານເຫຼົ່ານັ້ນຖ້າບໍ່ມີຈຸດປະສົງຮ່ວມກັນໃນການຮຽກເກັບໜີ້ ເຊິ່ງລວມທັງການຮຽກຮ້ອງໃຫ້ຊຳລະເງິນຂອງ THR. Texas Health Resources ຈະປະຕິບັດຕາມການຮຽກເກັບເງິນຢ່າງທ່ວງທັນເວລາກັບບໍລິສັດປະກັນສຸຂະພາບຕາມທີ່ກົດໝາຍລັດເທັກຊັສກຳນົດໄວ້ ແຕ່ຈະຮຽກເກັບໂດຍບໍ່ເປັນຜົນເສຍກັບການຮຽກເກັບກັບບໍລິສັດປະກັນໄພ MVA ສຳລັບການຈ່າຍເງິ ນຫຼັກໃນການຮຽກຮ້ອງໃຫ້ຊຳລະເງິນ.

ທ່ານໝໍໃນກຸ່ມບຸກຄະລາກອນທາງການແພດທີ່ບໍ່ແມ່ນທ່ານໝໍ ຫຼື ຜູ້ໃຫ້ບໍລິການຂອງ Texas Health Physician Group ປະຕິບັດໜ້າທີ່ຢ່າງເປັນອິດສະຫຼະ ແລະ ບໍ່ແມ່ນລູກຈ້າງ ຫຼື ຕົວແທນຂອງໂຮງໝໍ Texas Health ຫຼື Texas Health Resources.

04/2024

TLC 04/24 THR.LAS_LAO